ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 2391/ທຄຕລ.....2024......
ນະຄອນຫຼວງວຽງຈັນ, ວັນທີ:.....03 JUL 2024.........

**ເຖິງ:** ບໍລິສັດ ບໍລິການສິ່ງພິມ ແລະ ບັນດາໂຮງພິມ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດ ສິ່ງພິມ ເພື່ອນຳໃຊ້ ເຂົ້າໃນວຽກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຈຳນວນ | ລາຍລະອຽດ |
|---|---|---|
| 1. ເຊືອກແດງມັດເງິນ | 1.700 ກໍ້ | • ເຊືອກສີແດງມັດເງິນ, ກວ້າງ 9 ມມ *ໜາ*0,9 ມມ, ພິມໜັງສື (BCEL) ສີຂາວ, ໜັກ 08 ກລ/ກໍ້, ແກນໄດ້ມາດຕະຖານ ທຄຕລ, ການຫຸ້ມຫໍ່: 02ກໍ້/ແພັກ ແລະ ລະບຸລາຍລະອຽດສິນຄ້າ ແລະ ຈຳນວນ, ສິນຄ້າຮັບປະກັນ 01 ປີ.<br>• **ໝາຍເຫດ : ການຈັດສົ່ງເຄື່ອງແມ່ນເປັນ 02 ຮອບ, ຮອບລະ 850 ກໍ້ ຫ່າງກັນ 05 ເດືອນ ຫຼັງຈາກສົ່ງຄັ້ງທີ 01 ແລະ ການຊຳລະເງິນແມ່ນຕາມການຈັດສົ່ງແຕ່ລະຮອບ.** |
| 2. ໃບມອບເງິນສົດ 3P | 4.000 ຫໍ່ | • ຂະໜາດ 16*18,8 ຊມ, ໃຊ້ເຈ້ຍເຄມີ 3 ໃບ/ຊຸດ (ຍີ່ຫໍ້ OJI ເກດ A) ພິມ 4 ສີ, ເຂົ້າເຫຼັ້ມດ້ວຍກາວແຍກຊຸດ<br>• ການຫຸ້ມຫໍ່: 500 ຊຸດ/ຫໍ່. 5 ຫໍ່/ແພັກ ແລະ ຕິດຕົວຢ່າງໃສ່ທຸກຫໍ່ ພ້ອມລະບຸລາຍອຽດຂອງສິນຄ້າ, ສິນຄ້າຮັບປະ ກັນ 1 ປີ<br>• **ໝາຍເຫດ : ການຈັດສົ່ງເຄື່ອງແມ່ນເປັນ 02 ຮອບ, ຮອບລະ 2.000 ຫໍ່ ຫ່າງກັນ 05 ເດືອນ ຫຼັງຈາກສົ່ງຄັ້ງທີ 01 ແລະ ການຊຳລະເງິນແມ່ນຕາມການຈັດສົ່ງແຕ່ລະຮອບ.** |

**ໝາຍເຫດ:**

1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າພຽງຢ່າງດຽວ.

➢ **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

○ **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດດ້ານສິ່ງພິມສະໜອງເຄື່ອງໃຊ້ຫ້ອງການ, ດໍາເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ .
2. ກໍານົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນຈັນ ວັນທີ 15 /07/20214 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement-@bcel.com.la ແລະ ສົ່ງສິນຄ້າຕົວຢ່າງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

○ **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນພຸດ, ທີ 24/07/2024 ເວລາ 9:00 ໂມງ ທີ່ ຊັ້ນ 05, ອາຄານ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກໍານົດເວລາໃນໃບສະເໜີລາຄາດັ່ງກ່າວພ້ອມ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນປະເທດ ( ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 30/09/2024 ) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

**ໝາຍເຫດ:**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.
2. ການຊໍາລະແມ່ນ ຈ່າຍເງິນ ຕາມມູນຄ່າສັ່ງຊື້ແຕ່ລະລາຍການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

## ເຊືອກມັດເງິນ

ເຊືອກສີແດງ
ຄວາມກວ້າງຂອງເຊືອກ: 9 mm
ຄວາມໜາຂອງເຊືອກ : 0,9 mm
ນໍ້າໜັກ : 8 gm/ກໍ້
ພິມໜັງສື ສີຂາວ




## ຂະໜາດແກນ

ຄວາມກວ້າງ: 21,3 cm
ຄວາມສູງ: 20 cm
ຄວາມໜາ: 7 mm



## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: